**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 014/ອກ.ອທ

ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2024

# ບົດສະຫຼຸບປະຈຳເດືອນ 3/2024
# ແລະ ແຜນວຽກຈຸດສຸມເດືອນ 4/2024

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 3/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 4/2024 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 3/2024 ແລະ ແຜນຈຸດສຸມປະຈຳເດືອນ 4/2024 ດັ່ງນີ້:

## I. ການເຄື່ອນໄຫວອວຽກງານທີ່ພົ້ນເດັ່ນປະຈຳເດືອນ 3/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຮຽບຮຽງເອກະສານປະກອບການສອນ
5. ຮຽບຮຽງເອກະສານປະກອບການບັນລະຍາຍ
6. ປ້ອງກັນຫົວຂໍ້ວິໄຈ ແລະ ເຂົ້າໂຄງສາມບົດ
7. ຝຶກອົບຮົມການນຳໃຊ້ ICT ແລະ ການສອນພາສາອັງກິດແບບ ( Momosingn ) ໃຫ້ແກ່ຄູປະຖົມ, ມັດທະຍົມ ສາທິດ ດົງຄຳຊ້າງ, ຄັ້ງວັນທີ 11-15 ມີນາ 2024.
8. ເຂົ້າຮ່ວມກອງປະຊຸມພັດທະນາເນື້ອໃນການຝຶກອົບຮົມ ການຈັດການຮຽນການສອນ ທີ່ຄຳນຶ່ງເຖິງບົດບາດຍິງຊາຍ ໃຫ້ແກ່ຄູສອນໃນສະຖາບັນສ້າງຄູ ຄັ້ງວັນທີ 26 ກຸມພາ ຫາ 1 ມີນາ 2024 ທີ່ໂຮງແຮມທະວິສຸກ ເມືອງວັງວຽງ ແຂວງວຽງຈັນ
9. ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການພັດທະນານະໂຍບາຍຄູແຫ່ງຊາດ ແລະ ການສົ່ງເສີມຄວາມສະເໝີພາບທາງເພດໃນຂະແໜງການສຶກສາ ຄັ້ງວັນທີ 4 ມີນາ 2024 ທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ

10. ຝຶກອົບຮົມແນະນຳການນຳໃຊ້ ແບບຟອມສັງເກດການສອນໃຫ້ຫ້ອງຮຽນ ຊັ້ນປະຖົມສຶກສາ ໃຫ້ແກ່ຜູ້ເຮັດວຽກສຶກສານິເທດເມືອງເປົ້າໝາຍສາມສ້າງ ແລະ ວິທະຍາໄລຄູ 8 ແຫ່ງ ຄັ້ງວັນທີ 11-20 ມີນາ 2024 ທີ່ທ່າລາດ ເມືອງແກ້ວອຸດົມ ແຂວງວຽງຈັນ

- **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

## II. ແຜນວຽກຈຸດສຸມປະຈຳເດືອນ 4/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

### ຂ. ວຽກງານວິຊາສະເພາະ

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນຳພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ສືບຕໍ່ການຮຽນບົດວິໄຈ
4. ຝຶກອົບຮົມ ການຈັດການຮຽນການສອນ ທີ່ຄຳນຶງເຖິງບົດບາດຍິງຊາຍ ໃຫ້ແກ່ຄູສອນໃນສະຖາບັນສ້າງຄູ
5. ຂຶ້ນແຜນສອນບຳລຸງພາສາອັງກິດໃຫ້ແກ່ຄູສອນໃນວິທະຍາໄລຄູ ດົງຄຳຊ້າງ

## III. ຂໍ້ສະເໜີ

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**